ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ ເລກທີ 25 /ກມສພ
ນະຄອນຫຼວງວຽງຈັນ, ວັນທີ 17 ພຶດສະພາ 2021

# ມະຕິ
# ວ່າດ້ວຍການເພີ່ມທະວີການນຳພາຂອງພັກ ຕໍ່ວຽກງານວັດທະນະທຳໃນໄລຍະໃໝ່

ວັດທະນະທຳ ແມ່ນບັນດາຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈ ທີ່ມວນມະນຸດປະດິດສ້າງຂຶ້ນໃນຂະບວນວິວັດແຕ່ລະໄລຍະປະຫວັດສາດແຫ່ງການກຳເນີດ, ຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມມະນຸດ. ພັກປະຊາຊົນປະຕິວັດລາວ ຍາມໃດກໍ່ໃຫ້ຄວາມສຳຄັນ ແລະ ຄວາມເອົາໃຈໃສ່ຕໍ່ວຽກງານວັດທະນະທຳ ໂດຍຖືວ່າ ວັດທະນະທຳ ແມ່ນຄຸນລັກສະນະ ແລະ ເປັນປັດໃຈພື້ນຖານຂອງການດຳລົງຄົງຕົວຂອງຊາດ, ແມ່ນກຳລັງດັນ ແລະ ຈຸດໝາຍຂອງການພັດທະນາສັງຄົມ ຕາມທິດສັງຄົມນິຍົມ. ບົນພື້ນຖານທິດນຳ “ຢາກສ້າງສັງຄົມນິຍົມ ຕ້ອງມີຄົນສັງຄົມນິຍົມ ”, ພັກເຮົາ ໄດ້ນຳພາຊີ້ນຳການສ້າງ ແລະ ເສີມຂະຫຍາຍ ຄວາມສີວິໄລທາງດ້ານວັດທະນະທຳ ໃຫ້ເປັນພື້ນຖານແຫ່ງຊີວິດສັງຄົມຂອງຊາດລາວ ໂດຍສຸມໃສ່ດຳເນີນວຽກງານສຶກສາອົບຮົມ, ສ້າງຄຸນສົມບັດສິນທຳກ້າວໜ້າ ແລະ ແບບແຜນການດຳລົງຊີວິດອັນສົດໃສ, ສ້າງວັດທະນະທຳໃຫ້ມີລັກສະນະຊາດ, ລັກສະນະມະຫາຊົນ ແລະ ລັກສະນະກ້າວໜ້າ, ປະກອບສ່ວນສຳຄັນເຂົ້າໃນການຮັບປະກັນໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ເສດຖະກິດ ມີການຂະຫຍາຍຕົວຕໍ່ເນື່ອງ, ສັງຄົມ ມີຄວາມສະຫງົບ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງ, ປ່ຽນແປງ ແລະ ຍົກລະດັບດີຂຶ້ນເທື່ອລະກ້າວ.

## I. ສະພາບວຽກງານວັດທະນະທຳໃນໄລຍະຜ່ານມາ.

ໃນໄລຍະຜ່ານມາ ພັກເຮົາ ໄດ້ຕັ້ງໜ້ານຳພາ-ຊີ້ນຳການປັບປຸງວຽກງານວັດທະນະທຳ ຢ່າງຕໍ່ເນື່ອງ, ທັດສະນະ ແລະ ຄວາມຮັບຮູ້ ກ່ຽວກັບວັດທະນະທຳ ໄດ້ຮັບການປັບປຸງ, ພັດທະນາ ແລະ ຍົກລະດັບຂຶ້ນ; ການກໍ່ສ້າງຊີວິດວັດທະນະທຳໃໝ່, ການສ້າງຄອບຄົວ ແລະ ບ້ານວັດທະນະທຳ ໄດ້ດຳເນີນໄປດ້ວຍຖ່ວງທ່າຂະຫຍາຍຕົວ ທີ່ເປັນຂະບວນການຟົດຟື້ນ, ຕໍ່ເນື່ອງ ແລະ ກວ້າງຂວາງ; ວັດທະນະທຳອັນດີງາມຂອງຊາດ ແລະ ຂອງບັນດາເຜົ່າ ໄດ້ຮັບການປົກປັກຮັກສາ, ເຜີຍແຜ່, ໂຄສະນາ, ເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ, ສະຕິຊາດເປັນເອກະພາບ, ຄວາມສາມັກຄີເປັນປຶກແຜ່ນຂອງຊາດເຮົາ ສືບຕໍ່ໄດ້ຮັບການເພີ່ມທະວີໃຫ້ໜັກແໜ້ນ.

ບົນພື້ນຖານ ການຈັດຕັ້ງພັນຂະຫຍາຍເນື້ອໃນຈິດໃຈຊີ້ນຳ ທີ່ກຳນົດອອກໃນບັນດາມະຕິຂອງພັກ ໂດຍສະເພາະ ແມ່ນມະຕິ 9 ສະໄໝທີ V (ປີ 1994) ກ່ຽວກັບວຽກງານວັດທະນະທຳໃນໄລຍະໃໝ່ນັ້ນ ພື້ນຖານວັດທະນະທຳຈຳນວນໜຶ່ງ ໄດ້ຮັບການຟື້ນຟູ, ປົກປັກຮັກສາ, ບູລະນະປະຕິສັງຂອນ ເປັນຕົ້ນ ວັດວາອາຮາມ; ໄດ້ສຳຫຼວດ, ກອບກູ້ວັດຖຸບູຮານ, ສະຖານບູຮານ ທີ່ເປັນມໍລະດົກທາງດ້ານວັດທະນະທຳ ແລະ ປະຫວັດສາດຂອງຊາດ; ໄດ້ປັບປຸງ, ກໍ່ສ້າງຫໍພິພິທະພັນ, ຫໍສະໝຸດ,

ທຳຫຼັກເມືອງແຫ່ງຕ່າງໆ, ບັນດາອະນຸສອນສະຖານ, ປັ້ນຫຼໍ່ ແລະ ປະດິດສະຖານ ອະນຸສາວະລີບັນພະບູລຸດ ແລະ ຜູ້ນຳການປະຕິວັດແຕ່ລະຮຸ່ນ; ວຽກງານສິລະປະ-ຫັດຖະກຳ, ສີໄມ້ລາຍມື, ພອນສະຫວັນ ແລະ ຄວາມສາມາດດ້ານການປະດິດຄິດແຕ່ງ ທາງດ້ານສິລະປະ, ວັນນະຄະດີ, ການສະແດງ, ວັນນະກຳ ໄດ້ຮັບການສົ່ງເສີມໃຫ້ນັບມື້ນັບອຸດົມຮັ່ງມີ ຂຶ້ນເລື້ອຍໆ. ອັນພົ້ນເດັ່ນແມ່ນ ມໍລະດົກທາງດ້ານວັດທະນະທຳຂອງຊາດເຮົາ ເຊັ່ນ: ນະຄອນຫຼວງພະບາງ, ວັດພູຈຳປາສັກ, ໄຫຫີນຊຽງຂວາງ, ສຽງແຄນລາວ ໄດ້ຖືກອົງການ UNESCO ຮັບຮອງ ແລະ ຂຶ້ນທະບຽນເປັນມໍລະດົກໂລກ; ນອກນັ້ນ ວັດຖຸບູຮານ, ປູສະນີຍະສະຖານອື່ນໆ ກໍ່ຄື ຄຸນຄ່າທີ່ເປັນເອກະລັກດ້ານວັດທະນະທຳ ໄດ້ຖືກປົກປັກຮັກສາ ແລະ ເສີມຂະຫຍາຍເປັນຢ່າງດີ.

ກົດໝາຍ ແລະ ນິຕິກຳຕ່າງໆ ຮັບໃຊ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ໃນຂົງເຂດວັດທະນະທຳ ໄດ້ຮັບການຄົ້ນຄວ້າສ້າງຂຶ້ນເປັນຈຳນວນຫຼວງຫຼາຍ ແລະ ຖືກຈັດຕັ້ງປະຕິບັດເຂັ້ມງວດຫຼາຍຂຶ້ນ, ການປະຕິບັດສິດປະຊາທິປະໄຕ ແລະ ຄວາມເປັນເຈົ້າຂອງປະເທດຊາດ ໄດ້ກາຍເປັນທ່າອຽງທີ່ຕັ້ງໜ້າຂອງສັງຄົມ, ຄວາມຍຸຕິທຳ, ຄວາມສາມັກຄີ ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການເສີມຂະຫຍາຍຂຶ້ນຢ່າງກວ້າງຂວາງ, ປະຊາຊົນສ່ວນໃຫຍ່ ໄດ້ຮັບຂໍ້ມູນຂ່າວສານ, ມີໂອກາດສຶກສາຮ່ຳຮຽນເຕັກນິກ-ວິທະຍາສາດທີ່ກ້າວໜ້າ, ທັນສະໄໝ ເພື່ອພັດທະນາຕົນເອງ, ສັງຄົມ ແລະປະເທດຊາດ; ພາຫະນະ ແລະ ເຕັກໂນໂລຊີ ສື່ມວນຊົນ ໄດ້ນຳໃຊ້ເຂົ້າໃນການໂຄສະນາວຽກງານວັດທະນະທຳ ນັບມື້ນັບເຂັ້ມແຂງ, ສາມາດຕອບສະໜອງຄວາມຕ້ອງການ ທາງດ້ານຈິດໃຈຂອງປະຊາຊົນລາວບັນດາເຜົ່າ.

ບັນຍາກາດການທຳມາຫາກິນ, ການແກ້ໄຂຄວາມທຸກຍາກ, ສ້າງຄວາມຮັ່ງມີ ໃນໝູ່ປະຊາຊົນ ນັບມື້ນັບເປັນຂະບວນກວ້າງຂວາງ, ຂະບວນການຟື້ນຟູ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະສົ່ງເສີມວຽກງານວັດທະນະທຳ ໂດຍການເຂົ້າຮ່ວມຂອງມະຫາຊົນ ກໍນັບມື້ນັບຫຼາຍຂຶ້ນ ຕາມທິດປະຊາຊົນເປັນຜູ້ສ້າງ, ເປັນຜູ້ປົກປັກຮັກສາ ແລະ ເປັນຜູ້ຊົມໃຊ້ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ເຊິ່ງເປັນກຳລັງດັນ ແລະ ເປົ້າໝາຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວ, ສາມາດເຊື່ອມໂຍງ, ແລກປ່ຽນວັດທະນະທຳກັບບັນດາປະເທດເພື່ອນມິດ ຢູ່ໃນພາກພື້ນ ແລະ ສາກົນ ນັບມື້ນັບກວ້າງຂວາງ.

ເຖິງຢ່າງໃດກໍຕາມ ໃນພາລະກິດແຫ່ງການສ້າງວັດທະນະທຳໃໝ່ ກໍຍັງມີຫຼາຍບັນຫາຕັ້ງຂຶ້ນ ເປັນຕົ້ນ:

- ການເຊື່ອມຊຶມ, ພັນຂະຫຍາຍ ມະຕິ, ຄຳສັ່ງ, ແນວທາງ, ແຜນນະໂຍບາຍ ຂອງພັກກ່ຽວກັບວຽກງານວັດທະນະທຳ ກໍ່ຄື ການສຶກສາອົບຮົມ ແລະ ປູກຈິດສຳນຶກຮັກຫອມມໍລະດົກ ວັດທະນະທຳອັນດີງາມ ແລະ ລ້ຳຄ່າຂອງຊາດ ບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະ ໜັກແໜ້ນ.
- ການຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ທາງດ້ານວັດທະນະທຳ ຍັງຊັກຊ້າ ແລະ ບໍ່ທັນພຽງພໍ, ບາງດ້ານຍັງບໍ່ແທດເໝາະກັບສະພາບຕົວຈິງ, ບໍ່ທັນກາຍເປັນສະຕິຂອງທົ່ວສັງຄົມຢ່າງແທ້ຈິງ ຈຶ່ງກໍ່ໃຫ້ເກີດມີປະກົດການຫຍໍ້ທໍ້ທາງວັດທະນະທຳໃນຫຼາຍດ້ານ ເຊັ່ນ: ແບບແຜນດຳລົງຊີວິດ, ສະຕິເຄົາລົບ ແລະ ປະຕິບັດກົດໝາຍຂອງຄົນຈຳນວນໜຶ່ງໃນສັງຄົມ ບໍ່ທັນສົມຄູ່ກັບການພັດທະນາ ແລະ ການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ; ຄຸນສົມບັດສິນທຳປະຕິວັດ, ແນວຄິດ-ຈິດໃຈໂອບເອື້ອອາລີ, ເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຄວາມສາມັກຄີ ມີບາງດ້ານຖືກເສື່ອມຖອຍ; ປະກົດການ

ຖືຜົນປະໂຫຍດສ່ວນຕົວ, ກຸ່ມກ້ອນ, ເຊື້ອສາຍ, ຊຶ່ງຊາວ, ທ້ອງຖິ່ນເໜືອກວ່າຜົນປະໂຫຍດສ່ວນລວມ ແລະ ຂອງຊາດ ກໍເກີດມີບໍ່ໜ້ອຍ; ແນວຄິດຊື້ຄ້າມັກງ່າຍ, ຫຼົ້ນກິນຟຸມເຟືອຍ, ເອື່ອຍອີງໃສ່ທຳມະຊາດ, ອີງໃສ່ລັດ ແລະ ການຊ່ວຍເຫຼືອຕ່າງປະເທດ, ຂາດຄວາມດຸໝັ່ນຂະຫຍັນພຽນໃນການອອກແຮງງານ ແລະ ເປັນເຈົ້າການພັດທະນາຕົນເອງ, ພັດທະນາຄອບຄົວ ແລະ ປະເທດຊາດ ຢ່າງມີຫົວຄິດປະດິດສ້າງ, ບໍ່ມັກຄົ້ນຄວ້າຮໍ່າຮຽນ, ຂາດການປະດິດສ້າງ, ເຊື່ອຖືງົມງາຍ... ຍັງແຜ່ຫຼາຍ; ຂະນົບທຳນຽມ, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດຖືກຝ່າຝືນ, ມີການເຄື່ອນໄຫວວັດທະນະທຳ ຕາມແບບທຸລະກິດ-ການຄ້າດ້ານດຽວ, ສວຍໃຊ້ຮີດຄອງປະເພນີ ເປັນເງື່ອນໄຂຫາລາຍໄດ້ ທີ່ຝືນກັບຈັນຍາບັນ, ຈັນຍາທຳ, ກົດໝາຍ ແລະ ລະບຽບການ.

- ການຮັບເອົາ ແລະ ການເຊື່ອມໂຍງກັບວັດທະນະທຳພາຍນອກ ທີ່ບໍ່ມີການກັ່ນກອງ ແລະ ບໍ່ມີການເລືອກເຟັ້ນ ໄດ້ເຮັດໃຫ້ກະແສວັດທະນະທຳທີ່ເປັນພິດເປັນໄພ, ຊອດກະຈາ ແຜ່ລາມເຂົ້າມາ, ການເຊື່ອຖືຮີດຄອງປະເພນີເກົ່າແກ່ຫຼ້າຫຼັງ ທີ່ເປັນການກີດກັ້ນ, ກົດໜ່ວງການພັດທະນາບາງດ້ານ ຍັງຖືກສວຍໃຊ້ເສີມແຕ່ງໃຫ້ສັບສົນ, ໜັກໜ່ວງຮ້າຍແຮງກວ່າເກົ່າ ເປັນຕົ້ນ: ງານແຕ່ງດອງ, ງານຊາປະນະກິດສົບ... ຍັງມີລັກສະນະອວດອ້າງຖານະ ແລະ ປາລະມີ, ການເຮັດບຸນສົບກິນທານຈຳນວນໜຶ່ງ ຍັງມີລັກສະນະຟຸມເຟືອຍ, ຖືເອົາການດື່ມສິ່ງມຶນເມົາ ເປັນບັນຫາຕົ້ນຕໍ; ການຄ້າ ແລະ ເສບຢາເສບຕິດ ຍັງແຜ່ຫຼາຍ, ບັນຫາໄພສັງຄົມ: ການຄ້າປະເວນີ, ການຄ້າມະນຸດ, ການຢ່າຮ້າງ, ການພະນັນ, ການປຸ້ນຈີ້, ລັກ, ຊິງຊັບ, ການຕົວະຍົວະ, ຫຼອກລວງ, ການສໍ້ໂກງກັນ, ການຂັດແຍ່ງກັນທາງດ້ານຜົນປະໂຫຍດຕ່າງໆໃນສັງຄົມ, ກຸ່ມແກ໊ງອັນຕະພານ, ອາລະວາດຕີກັນ, ຂີ່ລົດກວນເມືອງ, ອຸບັດຕິເຫດຕາມທ້ອງຖະໜົນ... ມີລັກສະນະເພີ່ມຂຶ້ນ.

- ຄ່ານິຍົມທີ່ບໍ່ຖືກຕ້ອງ, ການກະທຳທີ່ຂັດກົດໝາຍ ແລະ ບໍ່ສອດຄ່ອງກັບມູນເຊື້ອວັດທະນະທຳອັນດີງາມ ທີ່ເປັນເອກະລັກຂອງຊາດ ກໍຄື ພົວພັນເຖິງຈິດໃຈຊາດ, ເອກະລາດເປັນເຈົ້າຕົນເອງ ຍັງມີລັກສະນະແຜ່ລາມ ແລະ ບໍ່ທັນຖືກຄວບຄຸມ, ແກ້ໄຂຢ່າງເຂັ້ມງວດ, ທັນການ ເຊັ່ນ: ການນຳໃຊ້ເງິນຕາຕ່າງປະເທດເຂົ້າໃນການຊຳລະສະສາງ, ຊື້-ຂາຍ ແລະ ບໍລິການແບບເສລີຊະຊາຍ, ການປະດິດຄິດແຕ່ງ, ພາສາປາກເວົ້າ, ການສະແດງກິລິຍາມາລະຍາດ, ການນຸ່ງຖືແຕ່ງກາຍ... ຊຶ່ງສ່ວນໃຫຍ່ແມ່ນຍ້ອນຜົນກະທົບຈາກການນຳເຂົ້າ ແລະ ຊົມໃຊ້ ຜະລິດຕະພັນວັດທະນະທຳຈາກຕ່າງປະເທດ, ຈາກສື່ ແລະ ແອັບພລິເຄຊັ່ນຕ່າງໆ; ການຄຸ້ມຄອງລິຂະສິດ, ການພິມ ແລະ ຜະລິດຕະພັນວິຈິດສິນ ທີ່ຈຳໜ່າຍຢູ່ພາຍໃນ ຍັງບໍ່ເຂັ້ມງວດ, ຮັດກຸມ.

- ວຽກງານປຸກລະດົມມະຫາຊົນ ເຂົ້າຮ່ວມຂະບວນການກໍ່ສ້າງວັດທະນະທຳໃໝ່ ຢູ່ຮາກຖານ ຍັງບໍ່ທັນແຂງແຮງ, ກວ້າງຂວາງທົ່ວເຖິງ; ການແບ່ງຂັ້ນຄຸ້ມຄອງດ້ານວັດທະນະທຳ ຍັງບໍ່ທັນສອດຄ່ອງ ແລະ ຈະແຈ້ງ; ກົນໄກການປະສານສົມທົບແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທາງດ້ານວັດທະນະທຳ ລະຫວ່າງຂະແໜງການ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນກົມກຽວ ແລະ ເຂັ້ມງວດ, ມີລັກສະນະໂຍນຄວາມຮັບຜິດຊອບໃຫ້ກັນ.

II. ທັດສະນະພື້ນຖານ ຂອງພັກ, ທິດທາງລວມ, ຄາດໝາຍສູ້ຊົນ ແລະ ໜ້າທີ່ຕົ້ນຕໍ ຂອງວຽກງານວັດທະນະທຳ ໃນຊຸມປີຕໍ່ໜ້າ.

**1. ທັດສະນະພື້ນຖານ ຂອງພັກ ກ່ຽວກັບວຽກງານວັດທະນະທຳ.**

(1) ພັກເຮົາ ຖືວັດທະນະທຳ ເປັນປັດໃຈພື້ນຖານແຫ່ງການດຳລົງຄົງຕົວ ຂອງຊາດ, ເປັນກຳລັງຊຸກດັນໃຫ້ແກ່ສັງຄົມຂະຫຍາຍຕົວ ທັງແມ່ນຈຸດໝາຍ ຂອງການພັດທະນາສັງຄົມ ແລະ ພັດທະນາຄົນ. ສືບຕໍ່ເພີ່ມທະວີການນຳພາ-ຊີ້ນຳການສ້າງວັດທະນະທຳ ທີ່ມີລັກສະນະຊາດ, ກ້າວໜ້າ ແລະ ມະຫາຊົນ ເພື່ອອະນຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍບັນດາຄຸນຄ່າພູມປັນຍາ, ມໍລະດົກວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງເຜົ່າ ທີ່ເປັນພື້ນຖານໃຫ້ແກ່ການສ້າງ ແລະ ຍົກສູງສະຕິຊາດ ເອກະລາດ, ເອກະພາບ, ເຊີດຊູກຽດສັກສີ ແລະ ນໍ້າໃຈຮັກຊາດອັນສູງສົ່ງ, ເປັນເຈົ້າຕົນເອງ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄຸນສົມບັດສິນທຳກ້າວໜ້າ, ມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ມີຄວາມອົດທົນ, ດຸໝັ່ນອອກແຮງງານ, ປະຢັດສ້າງ, ປະຢັດມັດທະຫຍັດ, ສັດຊື່ບໍລິສຸດ, ເຄົາລົບກົດໝາຍ, ມີແບບແຜນດຳລົງຊີວິດທີ່ສົດໃສຈົບງາມ ແລະ ມີຄວາມຮູ້ຄວາມສາມາດ, ຮັບປະກັນໃຫ້ຊາດເຮົາຢືນຍົງຄົງຕົວ ບົນພື້ນຖານຄວາມເປັນເອກະລັກທາງດ້ານວັດທະນະທຳ ແລະ ມູນເຊື້ອ ຂອງຊາດລາວ, ສາມາດເຊື່ອມໂຍງ ແລະ ຮັບເອົາສິ່ງຍອດຍິ່ງຂອງຍຸກສະໄໝ ຢ່າງມີການເລືອກເຟັ້ນ.

(2) ເສີມຂະຫຍາຍຄຸນຄ່າວັດທະນະທຳທີ່ເປັນເອກະລັກຂອງຊາດ ແລະ ພັດທະນາຄວາມສີວິໄລດ້ານຈິດໃຈ ຂອງສັງຄົມຢ່າງບໍ່ຢຸດຢັ້ງ ໂດຍຢຶດຖືເອົາການສ້າງຄວາມຈະເລີນທາງດ້ານເສດຖະກິດ ຕ້ອງໄປຄຽງຄູ່ກັບການສ້າງຄວາມສີວິໄລດ້ານຈິດໃຈ ແລະ ຕ້ອງມີການສົມທົບ ລະຫວ່າງສອງດ້ານດັ່ງກ່າວຢ່າງແໜ້ນແຟ້ນ ເພື່ອສ້າງເປັນກຳລັງແຮງສັງລວມ ຮັບປະກັນໃຫ້ການພັດທະນາປະເທດຊາດ ມີຄວາມຍືນຍົງ, ໝັ້ນຄົງ ແລະ ກ້າວເດີນສູ່ຈຸດໝາຍສັງຄົມ ຢ່າງໜັກແໜ້ນ.

(3) ພັກເຮົາ ຖືວຽກງານວັດທະນະທຳ ເປັນສະໜາມຮົບສຳຄັນ, ໜ້າທີ່ໃຈກາງ ຂອງວຽກງານວັດທະນະທຳ ໃນສະພາບການໃໝ່ ຕ້ອງຮັບປະກັນສອງດ້ານ ໄປພ້ອມກັນຄື: ດ້ານໜຶ່ງ ແມ່ນການຕໍ່ສູ້, ຕ້ານ, ສະກັດກັ້ນ ແລະ ແກ້ໄຂ ບັນຫາຫຍໍ້ທໍ້ໃນສັງຄົມ ໃຫ້ມີປະສິດທິຜົນ, ສ່ວນອີກດ້ານໜຶ່ງ ແມ່ນເສີມຂະຫຍາຍ, ພັດທະນາ ຍົກລະດັບຄຸນຄ່າວັດທະນະທຳ ຂອງຊາດ, ປູກຈິດສຳນຶກ ແລະ ສ້າງຄວາມຮັບຜິດຊອບຕໍ່ສັງຄົມ, ຕື່ນຕົວປະຕິບັດພັນທະ ແລະ ມີຈັນຍາບັນ ໃນການປະຕິບັດໜ້າທີ່ ເພື່ອສັງຄົມຂອງຄົນລາວ. ດ້ວຍເຫດນັ້ນ ການປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳ ຕ້ອງໄປຄຽງຄູ່ກັບການຮັກສາຄວາມໝັ້ນຄົງຂອງຊາດ, ທັງເປັນການກະຕຸກຊຸກຍູ້ເພື່ອໃຫ້ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວ ແລະ ພັດທະນາ ຢ່າງກົມກຽວກັນ.

(4) ວັດທະນະທຳຂອງຊາດລາວ ແມ່ນສິ່ງຍອດຍິ່ງຂອງຄົນລາວ, ແມ່ນຄວາມເອກອ້າງທະນົງໃຈ ແລະ ທັງແມ່ນສິ່ງຊຸກຍູ້ປຸກຈິດໃຈຄົນໃນຊາດ **"ເສຍວັດທະນະທຳ ແມ່ນເສຍຊາດ"**, ເຊິ່ງຄົນລາວ ຕ້ອງພ້ອມພຽງກັນຮັກສາວັດທະນະທຳ ແລະ ເພີ່ມພູນຄູນສ້າງຄຸນຄ່າວັດທະນະທຳແຫ່ງຊາດ, ຮັບປະກັນໃຫ້ທົ່ວປວງຊົນ ໄດ້ຮັບການພັດທະນາ, ຍົກລະດັບທາງດ້ານແນວຄິດ-ວັດທະນະທຳ ຂຶ້ນຢ່າງບໍ່ຢຸດຢັ້ງ ເປັນຕົ້ນ ແມ່ນດ້ານພູມປັນຍາ, ຄວາມຮູ້, ການປະດິດຄິດສ້າງ, ຫຼັກສິນທຳ ແລະ ອື່ນໆ.

(5) ການປົກປັກຮັກສາ ແລະ ພັດທະນາວັດທະນະທຳຂອງຊາດ ແມ່ນໜ້າທີ່ ຂອງທົ່ວສັງຄົມ ອົງການພັກ, ອົງການລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ, ລວມທັງຫົວໜ່ວຍພະລິດທຸລະກິດ, ຄອບຄົວ, ຊຸມຊົນຕ່າງໆ ລ້ວນແຕ່ມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການປົກປັກຮັກສາ, ກໍ່ສ້າງ ແລະ ເສີມຂະຫຍາຍ ເຮັດໃຫ້ການພັດທະນາວຽກງານວັດທະນະທຳ ດຳເນີນໄປຢ່າງໜັກແໜ້ນ ຕາມທິດສັງ

ຄົມນິຍົມ.

**2. ທິດທາງລວມ ຂອງວຽກງານວັດທະນະທຳ ໃນຊຸມປີຕໍ່ໜ້າ.**

(1) ຍຶດໝັ້ນແນວທາງການພັດທະນາແບບຍືນຍົງ, ຖືເອົາຄົນເປັນເປົ້າໝາຍບູລິມະສິດ ແລະ ກຳລັງດັນຂອງການພັດທະນາ, ເສີມຂະຫຍາຍ ແລະ ສ້າງອະລິຍະທຳ, ຄວາມສີວິໄລທາງດ້ານຈິດໃຈ, ຄວາມຢູ່ດີກິນດີທາງດ້ານວັດຖຸ, ສົ່ງເສີມຄ່ານິຍົມທີ່ຖືກຕ້ອງຂອງສັງຄົມ ໃຫ້ສອດຄ່ອງກັບທິດສັງຄົມນິຍົມ ຢ່າງໜັກແໜ້ນ.

(2) ສືບຕໍ່ສ້າງຄົນລາວ ໃຫ້ເປັນພົນລະເມືອງດີ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮັກ ແລະ ດຸໝັ່ນອອກແຮງງານ ເພື່ອເປັນເຈົ້າຕົນເອງໃນການພັດທະນາປະເທດຊາດ, ມີຄວາມຮູ້ຄວາມສາມາດ, ມີຄວາມຮັບຜິດຊອບຕໍ່ສັງຄົມ, ຕໍ່ພັນທະພົນລະເມືອງ, ມີສະຕິເຄົາລົບ ແລະ ສະເໝີພາບຕໍ່ກົດໝາຍ. ໃນຕໍ່ໜ້ານີ້ ຕ້ອງເຮັດໃຫ້ໂລກະທັດ ແລະ ຊີວະທັດ ຂອງລັດທິສັງຄົມນິຍົມ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອຂອງຊາດລາວ ແລະ ອຸດົມການສັງຄົມນິຍົມ ຊຶມລຶກເຂົ້າສູ່ຊີວິດສັງຄົມ, ກາຍເປັນຄຸນສົມບັດ ແລະ ແບບແຜນດຳລົງຊີວິດພື້ນຖານ ຂອງສັງຄົມ; ສ້າງເງື່ອນໄຂໃຫ້ພົນລະເມືອງລາວໄດ້ປະກອບສ່ວນໂດຍກົງ ເຂົ້າໃນການປະດິດສ້າງຄຸນຄ່າວັດທະນະທຳໃໝ່, ສ້າງການພົວພັນສັງຄົມ ທີ່ສະແດງອອກເຖິງຄຸນຄ່າວັດທະນະທຳອັນດີງາມ, ມາລະຍາດການດຳລົງຊີວິດ, ອາລິຍະທຳທາງດ້ານຈິດໃຈຂອງສັງຄົມທີ່ເອື້ອເຟື້ອເພື່ອແຜ່, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີຄວາມສາມັກຄີເປັນປຶກແຜ່ນ ໃນທົ່ວປວງຊົນລາວ.

(3) ເດັດດ່ຽວຈຳກັດ, ຫຼຸດຜ່ອນ ບັນດາພົນສະທ້ອນຂອງລະບົບແນວຄິດ-ວັດທະນະທຳ ພື້ນປະຕິວັດ, ຕ້ານສິ່ງຫຍໍ້ທໍ້, ຫຼົງໄຫຼ, ງົມງວາຍ ພື້ນວິທະຍາສາດ ແລະ ທັດສະນະຜິດຂອງຕ່າງໆ. ຊຸກຍູ້ ສົ່ງເສີມ, ຟື້ນຟູ, ອະນຸລັກ, ພັດທະນາ, ສືບທອດ ແລະ ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກວັດທະນະທຳທີ່ເປັນເອກະລັກ ຂອງຊາດ ໃຫ້ຍືນຍົງ, ສ້າງແບບແຜນດຳລົງຊີວິດ ຕາມວິຖີຊີວິດແບບໃໝ່ (New Normal), ລົບລ້າງຮ່ອງຮອຍ ແລະ ຕ້ານກະແສວັດທະນະທຳທີ່ເປັນພິດໄພ, ລາມົກອະນາຈານ, ການເຊື່ອຖືງົມງວາຍ ແລະ ຫຼົງໄຫຼ, ຂີ້ຄ້ານມັກງ່າຍ, ທັດສະນະແນວຄິດແບບແຜນຊຸມນາງ, ອາດຍາສິດຊຸນເສີກ, ແບບສັກດີນາຫຼົງໄຫຼ, ຄອຍຖ້າໂຊກລາບວາດສະໜາທີ່ບໍ່ມີຈິງ; ຍູ້ແຮງຂະບວນການສ້າງຄອບຄົວ ແລະ ບ້ານວັດທະນະທຳ ໃຫ້ກາຍເປັນຂອງທົ່ວປວງຊົນ, ຕັ້ງໜ້າແກ້ໄຂຄວາມຫຼຸດໂຕນ ແລະ ແຕກຕ່າງກັນ ກ່ຽວກັບການຊົມໃຊ້ວັດທະນະທຳ ລະຫວ່າງ ຕົວເມືອງ ກັບ ຊົນນະບົດ; ສົ່ງເສີມການປະດິດສ້າງດ້ານວັດທະນະທຳ ແນໃສ່ພັດທະນາຜະລິດຕະພັນວັດທະນະທຳ ໃຫ້ມີຄວາມອຸດົມສົມບູນ, ຫຼາກຫຼາຍຮູບແບບ, ສາມາດຕອບສະໜອງການໃຫ້ຄວາມສຸກແກ່ສັງຄົມ.

**3. ຄາດໝາຍສູ້ຊົນ ແລະ ໜ້າທີ່ພື້ນຖານ ຂອງວຽກງານວັດທະນະທຳ ໃນຊຸມປີຕໍ່ໜ້າ.**

**ກ. ຄາດໝາຍສູ້ຊົນ:**

(1) ຕັ້ງໜ້າແກ້ໄຂບັນດາຂໍ້ຄົງຄ້າງ, ບັນຫາຫຍໍ້ທໍ້ ໃນຂົງເຂດວັດທະນະທຳ ໃຫ້ຫຼຸດໜ້ອຍຖອຍລົງ.

(2) ສູ້ຊົນເຮັດໃຫ້ທົ່ວປວງຊົນລາວ ມີຄວາມຮັບຮູ້, ເຊື່ອມຊຶມ ແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ຂອງລັດ ກ່ຽວກັບວຽກງານວັດທະນະທຳ ຢ່າງເລິກເຊິ່ງ; ສ້າງສັງຄົມທີ່ມີຄວາມສາມັກຄີເປັນປຶກແຜ່ນ, ຍຸຕິທຳ, ເອື້ອເຟື້ອເພື່ອແຜ່, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາ

ທິປະໄຕປະຊາຊົນ, ເຊີດຊູມູນເຊື້ອພິລະອາດຫານ, ດຸໝັ່ນອອກແຮງງານ, ປະດິດສ້າງ, ຄົ້ນຄວ້າ ຮໍ່າຮຽນເອົາວິທະຍາສາດ-ເຕັກໂນໂລຊີ ທີ່ກ້າວໜ້າ, ທັນສະໄໝ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ພາຍໃຕ້ການນໍາພາຂອງພັກ.

(3) ບໍາລຸງສ້າງພະນັກງານ-ລັດຖະກອນ ທາງດ້ານການເມືອງ, ວັດທະນະທໍາ ແລະ ວິຊາສະເພາະ ທາງດ້ານວັດທະນະທໍາ ໃຫ້ພຽງພໍທັງປະລິມານ ແລະ ຄຸນນະພາບ, ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່. ປຸກລະດົມປະຊາຊົນ ເຂົ້າຮ່ວມຂະບວນການເຄື່ອນໄຫວປະດິດສ້າງ, ປົກປັກຮັກສາ, ພັດທະນາ ແລະ ຊົມໃຊ້ວັດທະນະທໍາອັນດີງາມ ຂອງຊາດເອກະລັກຂອງເຜົ່າ, ຂອງທ້ອງຖິ່ນ. ພັດທະນາອຸດສາຫະກໍາທາງດ້ານວັດທະນະທໍາ, ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ພອນສະຫວັນ ເຂົ້າໃນການສ້າງຜະລິດຕະພັນວັດທະນະທໍາ ໃຫ້ມີຄວາມອຸດົມຮັ່ງມີ, ຫຼາຍຮູບຫຼາຍສີ ແລະ ມີຄຸນນະພາບ.

(4) ປຸກລະດົມທົ່ວສັງຄົມ ຊຸກຍູ້ຊ່ວຍເຫຼືອ ແລະ ພ້ອມທັງຂົນຂວາຍເອົາການຊ່ວຍເຫຼືອ, ສະໜັບສະໜູນ, ການພົວພັນຮ່ວມມື ແລະ ການແລກປ່ຽນວັດທະນະທໍາ ກັບບັນດາປະເທດເພື່ອນມິດ ແລະ ສາກົນ ເພື່ອນໍາເອົາທຶນຮອນ, ບົດຮຽນ, ປະສົບການ ກ່ຽວກັບສິ່ງຍອດຍິ່ງດ້ານວັດທະນະທໍາຂອງຍຸກສະໄໝມາພັດທະນາ, ຍົກລະດັບວຽກງານວັດທະນະທໍາຂອງຊາດເຮົາ ໃຫ້ມີຄວາມເຂັ້ມແຂງ, ທັນສະໄໝ ດ້ວຍຄວາມເປັນເຈົ້າການ ແລະ ປະດິດສ້າງ.

**ຂ. ໜ້າທີ່ຕົ້ນຕໍ ທີ່ຈະຕ້ອງສຸມໃສ່ປະຕິບັດໃນຊຸມປີຕໍ່ໜ້າ.**

(1) ຄົ້ນຄວ້າ, ປັບປຸງ, ສ້າງກົດໝາຍ ແລະ ນິຕິກໍາຕ່າງໆ, ທັງໂຄສະນາສຶກສາອົບຮົມ ປູກຈິດສໍານຶກໃຫ້ທຸກຄົນໃນສັງຄົມ ຮັບຮູ້, ເຂົ້າໃຈ ຄວາມໝາຍຄວາມສໍາຄັນ ຂອງວຽກງານວັດທະນະທໍາ ໂດຍສະເພາະ ການຮັກຄ່ານິຍົມຄວາມເປັນຊາດ, ຄວາມຮັກເຊື້ອແພງຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮັກມັກການອອກແຮງງານ, ຊື່ສັດ, ປະຢັດ, ອົດທົນ ເຂົ້າໃນການພັດທະນາຕົນເອງ ແລະ ຄອບຄົວ ບົນຈິດໃຈສູ້ຊົນ ປີນຂຶ້ນເພິ່ງຕົນເອງ, ກຸ້ມຕົນເອງ ແລະ ຮູ້ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເລືອກເຟັ້ນເອົາການຊ່ວຍເຫຼືອ, ສະໜັບສະໜູນ ຈາກເພື່ອນມິດສາກົນໃຫ້ເປັນກໍາລັງແຮງໃນການພັດທະນາປະເທດຊາດ. ສຶກສາຄົ້ນຄວ້າ, ວິໃຈ, ອະນຸລັກຮັກສາ ແລະ ວາງແຜນພັດທະນາ, ຄຸ້ມຄອງວັດທະນະທໍາລາວທຸກຂະແໜງການ ໃຫ້ເປັນລະບົບ; ສ້າງ ແລະ ສົ່ງເສີມສັງຄົມ ໃຫ້ມັກຄົ້ນຄວ້າ ຂີດຂຽນ, ມັກການອ່ານ ໃຫ້ກາຍເປັນຄ່ານິຍົມ, ແບບແຜນຊີວິດປະຈໍາວັນ ຂອງຄົນລາວ; ປັບປຸງ, ສົ່ງເສີມ ແລະ ຄຸ້ມຄອງວັດທະນະທໍາ ໃຫ້ສອດຄ່ອງກັບສະພາບຈຸດພິເສດ ຂອງແຕ່ລະທ້ອງຖິ່ນ. ໃຫ້ຄົ້ນຄວ້າປັບປຸງວິຊາຄຸນສົມບັດສຶກສາ, ຈາລິຍະທໍາ, ມາລະຍາດ ແລະ ການປະພຶດທາງສັງຄົມ ເຂົ້າໃນຫຼັກສູດການສຶກສາຢ່າງເປັນລະບົບ, ທັງສ້າງໃຫ້ມີສະຖານທີ່ຄົ້ນຄວ້າວິໃຈ, ສຶກສາອົບຮົມ ເພື່ອປູກຈິດສໍານຶກ, ແນະນໍາ ການສ້າງຄ່ານິຍົມທີ່ຖືກຕ້ອງ ໃຫ້ແກ່ກັບແກວເຍົາວະຊົນ-ຊາວໜຸ່ມ.

(2) ສືບຕໍ່ສ້າງ ແລະ ບໍາລຸງບຸກຄະລາກອນ ທາງດ້ານວັດທະນະທໍາ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ນັບມື້ນັບຫຼາຍຂຶ້ນ ໂດຍເລັ່ງໃສ່ປັບປຸງ, ກໍ່ສ້າງໂຮງຮຽນ, ສະຖາບັນວິຊາຊີບ ແລະ ລະບົບມະຫາວິທະຍາໄລ ຢູ່ພາຍໃນປະເທດ ເພື່ອສົ່ງເສີມ ແລະ ຖ່າຍທອດ, ອະນຸລັກຮັກສາ, ເສີມຂະຫຍາຍທ່າແຮງບົ່ມຊ້ອນ ກ່ຽວກັບວັດທະນະທໍາ ກໍຄື ສິ

ລະປະດ້ານຕ່າງໆຂອງຊາດ, ຂອງເຜົ່າ ຈາກຣຸ່ນຄົນນີ້ໄປສູ່ຄົນຣຸ່ນຕໍ່ໄປ ໃຫ້ມີຄວາມຕໍ່ເນື່ອງ ແລະ ຍືນຍົງ.

(3) ສ້າງລະບົບຖານຂໍ້ມູນ, ສະຖິຕິທາງດ້ານວັດທະນະທໍາປະເພດຕ່າງໆ ໃຫ້ເປັນຄັງສາງມໍລະດົກ ທາງດ້ານວັດທະນະທໍາຂອງຊາດ, ທັງປົກປັກຮັກສາ, ທັງສ້າງ ແລະ ເສີມຂະຫຍາຍມໍລະດົກ ແລະ ຄຸນຄ່າວັດທະນະທໍາຂອງຊາດ, ຂອງເຜົ່າ ໃຫ້ເປັນມໍລະດົກລະດັບທ້ອງຖິ່ນ, ລະດັບຊາດ ແລະ ມໍລະດົກໂລກ.

(4) ສ້າງຄອບຄົວວັດທະນະທໍາ ແລະ ບ້ານວັດທະນະທໍາ ໃຫ້ມີຄຸນນະພາບ ແລະ ເປັນຂະບວນການກວ້າງຂວາງ ທັງຮັບປະກັນ 4 ເນື້ອໃນ 4 ຄາດໝາຍ ຂອງວຽກງານປັບປຸງ, ກໍ່ສ້າງຮາກຖານການເມືອງໃນໄລຍະໃໝ່ ປະກອບສ່ວນເຂົ້າໃນການສ້າງບ້ານພັດທະນາ ຕິດພັນກັບ ການຍູ້ຂະບວນຮັກຊາດ ແລະ ພັດທະນາໃຫ້ແຂງແຮງ, ແນໃສ່ເຮັດໃຫ້ຊົນນະບົດ ມີໂສມໜ້າຫັນປ່ຽນໃໝ່, ປະຊາຊົນ ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ເປັນກ້າວໆ.

(5) ສູ້ຊົນສ້າງສູນວັດທະນະທໍາເດັກ ໃຫ້ລົງເຖິງເຂດເທດສະບານ ຂອງເມືອງ, ບ້ານໃຫຍ່ທີ່ມີເງື່ອນໄຂໃນທົ່ວປະເທດ, ສ້າງ ແລະ ປັບປຸງ ຫໍສະໝຸດປະເພດຕ່າງໆ, ຫໍພິພິທະພັນ, ຫ້ອງວາງສະແດງ, ສະໂມສອນວັດທະນະທໍາ, ສວນສາທາລະນະ; ຄຸ້ມຄອງປ້າຍ ແລະ ສິ່ງເສີມຮີດຄອງປະເພນີ, ພິທີກໍາຕ່າງໆ ໃຫ້ຮັດກຸມ, ມີຄວາມເປັນລະບຽບຮຽບຮ້ອຍ; ສະກັດກັ້ນ, ຕ້ານ ແລະ ແກ້ໄຂການເຊື່ອຖືງົມງາຍ, ປະກົດການຫຍໍ້ທໍ້ດ້ານວັດທະນະທໍາ-ສັງຄົມ ທີ່ກົດໜ່ວງທ່ວງດຶງການພັດທະນາປະເທດຊາດ ໃຫ້ຕົກໄປເປັນກ້າວໆ.

(6) ສົ່ງເສີມຫົວຄິດປະດິດສ້າງ ຂອງເຫຼົ່າສິລະປິນອາຊີບ ແລະ ສະໝັກຫຼິ້ນ ດ້ວຍການປະຕິບັດນະໂຍບາຍດ້ານວັດຖຸ ແລະ ຈິດໃຈທີ່ເໝາະສົມ, ການປະດັບນາມມະຍົດສິລະປິນ ເພື່ອສົ່ງເສີມພອນສະຫວັນ, ຄວາມສາມາດປະດິດຄິດແຕ່ງ ເພງຮ້ອງ, ຂັບລໍາ, ບົດຟ້ອນ, ລະຄອນເວທີ, ລະຄອນວິທະຍຸ, ກາຍະສິນ ແລະ ລາຍການສະແດງຕ່າງໆ ໃຫ້ມີຄວາມອຸດົມສົມບູນຫຼາຍຫຼາກສີສັນ, ມີເນື້ອໃນສິລະປະສາດ ທີ່ເປັນເອກະລັກ ຂອງຊາດ ແລະ ທັນສະໄໝ; ປະກອບລະບົບເຕັກນິກ, ແສງ-ສີ-ສຽງ ໃຫ້ຫຍັບເຂົ້າໃກ້ມາດຕະຖານພາກພື້ນ ແລະ ສາກົນ; ສ້າງໃຫ້ສັງຄົມ ມີບັນຍາກາດເບີກບານມ່ວນຊື່ນ, ກະຕຸກຊຸກຍູ້ຂະບວນການສ້າງສາພັດທະນາ ແລະ ສາມາດເປັນສື່ສໍາພັນ ລະຫວ່າງປະເທດເຮົາ ກັບປະເທດເພື່ອນມິດ. ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານສິລະປະ ແລະ ວັດທະນະທໍາ ເຊັ່ນ: ການໃຊ້ແສງ-ສີ-ສຽງ, ການແຕ່ງຕົວຂອງສິລະປິນ, ການປະຕິບັດເວລາຂອງການສະແດງ, ການບັນເທີງໃນສັງຄົມ ໃຫ້ເປັນມິດກັບສິ່ງແວດລ້ອມ, ຖືກຕ້ອງຕາມກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງ.

(7) ຄົ້ນຄວ້າ, ຮິບໂຮມ, ຈັດພີມ, ເຜີຍແຜ່ຄວາມອຸດົມສົມບູນ ຂອງພາສາລາວ, ວັນນະຄະດີລາວ ແຕ່ລະຍຸກແຕ່ລະສະໄໝ; ສົ່ງເສີມ ແລະ ພັດທະນາພາສາລາວ ໃຫ້ເປັນເອກະລັກ, ອຸດົມສົມບູນ ແລະ ນໍາໃຊ້ເຂົ້າກັບຍຸກສະໄໝໄດ້; ຊຸກຍູ້ການປະດິດຄິດແຕ່ງວັນນະຄະດີປະເພດຕ່າງໆ, ສົ່ງເສີມວັດທະນະທໍາ ການອ່ານ, ການຂຽນ, ການແປ ຢ່າງກວ້າງຂວາງໃນທົ່ວສັງຄົມ ໂດຍສະເພາະ ຄົນຣຸ່ນໜຸ່ມ; ຍົກລະດັບຄວາມສາມາດ ດ້ານການຄົ້ນຄິດ, ປະດິດແຕ່ງດ້ານສິລະປະວັນນະຄະດີໃຫ້ໂດດເດັ່ນ, ມີຊີວິດຊີວາ, ຊຸກຍູ້ສົ່ງເສີມນັກຂຽນເກັ່ງ, ບົດປະພັນດີເດັ່ນ ໃຫ້ໄດ້ຮັບນາມມະຍົດ ແລະ ລາງວັນ ໃນລະດັບຊາດ, ພາກພື້ນ ແລະ ສາກົນ ໃຫ້ຫຼາຍຂຶ້ນ.

(8) ຊີ້ນຳການອະນຸລັກ, ປົກປັກຮັກສາ, ການອອກແບບ, ຄຸ້ມຄອງ ການສ້າງອະນຸສາວະລີບັນພະບຸລຸດ, ວິລະຊົນແຫ່ງຊາດ, ສາສະໜາສະຖານ, ສະຖາປັດຕະຍະກຳ, ປະຕິມະກຳ, ປັ້ນຫຼໍ່, ແກະສະຫຼັກ, ຕີເຄື່ອງປະດັບ ແລະ ງານສິລະປະຫັດຖະກຳ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບມູນເຊື້ອ, ສິລະປະທີ່ລຶງຄຸນຄ່າ ແລະ ເປັນເອກະລັກຂອງຊາດ. ພ້ອມນັ້ນ ກໍເພີ່ມທະວີການອະນຸລັກ, ຄຸ້ມຄອງ ແລະ ນຳໃຊ້ ບັນດາປູສະນີຍະສະຖານ, ວັດຖຸບູຮານ ກໍ່ຄື ຄຸນຄ່າທີ່ເປັນເອກະລັກອັນດີງາມດ້ານວັດທະນະທຳ ແລະ ສິ່ງທີ່ເປັນມໍລະດົກ ຂອງທ້ອງຖິ່ນ, ຂອງຊາດ ແລະ ມໍລະດົກໂລກ ໃຫ້ຍືນຍົງ, ນຳຜົນປະໂຫຍດສູງສຸດ ດ້ານວັດຖຸ ແລະ ຈິດໃຈ ມາສູ່ປະເທດຊາດ ແລະ ປະຊາຊົນ; ບົນພື້ນຖານນັ້ນ ຕ້ອງດຳເນີນການຊຸກຍູ້, ສົ່ງເສີມ ແລະ ລົງທຶນເຂົ້າໃສ່ການປັບປຸງ, ພັດທະນາ, ຍົກລະດັບສະຖານທີ່, ແຫຼ່ງທ່ອງທ່ຽວ ດ້ານວັດທະນະທຳ ເພື່ອດຶງດູດນັກທ່ອງທ່ຽວ ແລະ ສ້າງຖານລາຍຮັບດ້ານການທ່ອງທ່ຽວ ໃຫ້ຫຼາຍຂຶ້ນຕື່ມ.

(9) ຄຸ້ມຄອງການເຄື່ອນໄຫວດ້ານຮູບເງົາ ຂອງທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບມູນເຊື້ອວັດທະນະທຳອັນດີງາມ ຂອງຊາດເຮົາ. ພັດທະນາຮູບເງົາລາວ ໃຫ້ກາຍເປັນອຸດສະຫະກຳ ແລະ ທັນສະໄໝ, ສ້າງຜະລິດຕະພັນຮູບເງົາລາວ ເຊັ່ນ: ຮູບເງົາເລື່ອງ, ຮູບເງົາເອກະສານ, ຮູບເງົາສາລະຄະດີ, ຮູບເງົາກາຕູນ, ລະຄອນໂທລະພາບ... ຊຸກຍູ້, ສົ່ງເສີມງານມະໂຫລານຮູບເງົາພາຍໃນປະເທດ, ສົ່ງຮູບເງົາລາວ ເຂົ້າຮ່ວມງານມະຫະກຳຮູບເງົາ ຢູ່ພາກພື້ນ ແລະ ສາກົນ.

(10) ກໍ່ສ້າງພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ໃຫ້ແກ່ການປົກປັກຮັກສາ, ພັດທະນາ ແລະ ສົ່ງເສີມ ວຽກງານວັດທະນະທຳ ຢູ່ຂັ້ນຮາກຖານຢ່າງເໝາະສົມ.

(11) ຊຸກຍູ້, ສົ່ງເສີມ ການຫັນເອົາກອງວິຊາການ ດ້ານວັດທະນະທຳ ຈຳນວນໜຶ່ງ ເປັນຫົວໜ່ວຍງົບປະມານຈາກລາຍຮັບວິຊາການ ເພື່ອເພິ່ງຕົນເອງ, ກຸ້ມຕົນເອງ ໃນບາງດ້ານ, ຫຼຸດຜ່ອນການຫາບແບກທາງດ້ານງົບປະມານ ຈາກລັດຖະບານ ເທື່ອລະກ້າວ.

(12) ປະສານສົມທົບວຽກງານດ້ານວັດທະນະທຳຢ່າງກົມກຽວ ລະຫວ່າງ ບັນດາຂະແໜງການ ທັງສູນກາງ ແລະ ທ້ອງຖິ່ນ, ຍາດແຍ່ງການຊ່ວຍເຫຼືອ, ສະໜັບສະໜູນ ຈາກສັງຄົມ ທັງພາຍໃນ ແລະ ຕ່າງປະເທດ; ສືບຕໍ່ພົວພັນຮ່ວມມື ແລະ ການແລກປ່ຽນວັດທະນະທຳ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ປະເທດຕ່າງໆ ໃນພາກພື້ນ ແລະ ສາກົນ ເພື່ອຍາດແຍ່ງເອົາບົດຮຽນ, ປະສົບການ, ທຶນຮອນ ແລະ ເລືອກເຟັ້ນເອົາສິ່ງຍອດຍິ່ງທາງດ້ານວັດທະນະທຳ ຂອງຍຸກສະໄໝ ມາພັດທະນາວຽກງານວັດທະນະທຳຂອງຊາດເຮົາ ໃຫ້ມີຄວາມເຂັ້ມແຂງ, ທັນສະໄໝ ແລະ ຍືນຍົງ.

## III. ມາດຕະການຈັດຕັ້ງປະຕິບັດ.

ວຽກງານວັດທະນະທຳ ແມ່ນຄວາມຮັບຜິດຊອບ ຂອງທຸກພາກສ່ວນ, ອົງການພັກ, ລັດ, ອົງການຈັດຕັ້ງມະຫາຊົນ, ບັນດາກຳລັງປະກອບອາວຸດ, ຫົວໜ່ວຍພະລິດທຸລະກິດ ຕະຫຼອດເຖິງພົນລະເມືອງລາວທຸກຄົນ ລວມທັງຊາວຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ເຊິ່ງລ້ວນແຕ່ມີໜ້າທີ່ເຮັດໃຫ້ທິດຊີ້ນຳກ່ຽວກັບວຽກງານວັດທະນະທຳ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ປະກົດຜົນເປັນຈິງ ດັ່ງນີ້:

1. ຄະນະພັກແຕ່ລະຂັ້ນ ຕ້ອງຈັດຕັ້ງການຄົ້ນຄວ້າ, ເຜີຍແຜ່, ເຊື່ອມຊຶມເນື້ອໃນຂອງມະຕິສະບັບນີ້ໃຫ້ເລິກເຊິ່ງ, ກວ້າງຂວາງ ພ້ອມທັງຫັນເປັນແຜນການ, ໂຄງການລະອຽດ, ປະກອບສ່ວນເຂົ້າໃນການຟື້ນຟູ, ອະນຸລັກ, ພັດທະນາ ແລະ ສົ່ງເສີມວັດທະນະທຳລາວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ.

2. ມອບໃຫ້ຄະນະໂຄສະນາອົບຮົມສູນກາງພັກ ຊີ້ນຳການກຳນົດທິດທາງ ແລະ ກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້, ຮັບຜິດຊອບຕໍ່ກົມການເມືອງສູນກາງພັກ ໃນການຕິດຕາມ, ຊອກຮູ້ບັນຫາຕ່າງໆ ທີ່ເກີດຂຶ້ນໃນຊີວິດສັງຄົມ ທາງດ້ານແນວຄິດ-ວັດທະນະທຳ ພ້ອມທັງ ສະເໜີທິດທາງ ແລະ ວິທີການແກ້ໄຂທີ່ຖືກຕ້ອງ ແລະ ທັນສະພາບການ.

3. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງຂຶ້ນແຜນການ, ໂຄງການລະອຽດ ກ່ຽວກັບການຜັນຂະຫຍາຍເນື້ອໃນຂອງມະຕິ, ຫັນໃຫ້ເປັນໜ້າວຽກອັນລະອຽດໃນແຕ່ລະດ້ານ ຂອງຂະແໜງການຕົນ ພ້ອມທັງປະສານສົມທົບຢ່າງກົມກຽວ ກັບຄະນະພັກ, ອົງການປົກຄອງທ້ອງຖິ່ນໃນທົ່ວປະເທດ ເພື່ອນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ຂະແໜງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຈັດຕັ້ງປະຕິບັດ ມະຕິສະບັບນີ້ໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ເປັນຂະບວນການຟົດຟື້ນ, ກວ້າງຂວາງ.

4. ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ບັນດາກຳລັງປະກອບອາວຸດ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ, ລວມທັງ ຫົວໜ່ວຍພະລິດທຸລະກິດ ຕະຫຼອດເຖິງຄອບຄົວ ແລະ ພົນລະເມືອງລາວທຸກຄົນ ລວມທັງ ຊາວຕ່າງປະເທດ ທີ່ ອາໄສ ຢູ່ ສປປ ລາວ ຕ້ອງໄດ້ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດທິດທາງ ວຽກງານວັດທະນະທຳ ຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ພັນທະ ຂອງຕົນ ໃຫ້ໄດ້ຮັບຜົນດີ.

5. ຊຸກຍູ້, ສົ່ງເສີມ ບັນດາສະມາຄົມວິຊາຊີບວັດທະນະທຳ ແລະ ປະຊາຊົນລາວບັນດາເຜົ່າ ໃຫ້ເຂົ້າຮ່ວມຂະບວນການສ້າງ, ປົກປັກຮັກສາ ແລະ ຊົມໃຊ້ວັດທະນະທຳລາວ ຢ່າງກວ້າງຂວາງ ຕາມແນວທາງ, ນະໂຍບາຍ ຂອງພັກ ແລະ ລັດເຮົາ.

ຕ. ກົມການເມືອງສູນກາງພັກ
ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ

ທອງລຸນ ສີສຸລິດ